ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄະນະນຳທະນາຄານແຫ່ງ ສປປ ລາວ ເຂົ້າໄຫວ້ອາໄລ ຕໍ່ອະດີດ ປະທານປະເທດ ແຫ່ງ ສ.ສ. ຫວຽດນາມ



ໃນຕອນບ່າຍຂອງວັນທີ 04 ພຶດສະພາ 2019 ຄະນະນຳທະນາຄານແຫ່ງ ສປປ ລາວ (ທຫລ) ຊຶ່ງນຳໂດຍທ່ານ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ຜູ້ວ່າການ ທຫລ ພ້ອມດ້ວຍຄະນະນຳ ທຫລ ໄດ້ເຂົ້າໄຫວ້ອາໄລ ຕໍ່ທ່ານ ເລ ດຶກ ແອັງ, ອະດີດ ກຳມະການກົມການເມືອງສູນກາງພັກກອມມູນິດ ຫວຽດນາມ, ອະດີດ ປະທານປະເທດ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ (ສ.ສ. ຫວຽດນາມ) ທີ່ ສະຖານທູດ ສ.ສ. ຫວຽດນາມ ປະຈຳ ສປປ ລາວ.

ທ່ານຜູ້ວ່າການ ທຫລ ໄດ້ໄຫວ້ອາໄລ ແລະ ຂຽນປຶ້ມໄຫວ້ອາໄລຢ່າງເປັນທາງການ ພ້ອມທັງສະແດງຄວາມໂສກເສົ້າເສຍໃຈຢ່າງສຸດຊຶ້ງຕໍ່ການຈາກໄປຂອງ ທ່ານ ເລ ດຶກ ແອັງ, ອະດີດ ກຳມະການ ກົມການເມືອງ ສູນກາງພັກ ກອມມູນິດ ຫວຽດນາມ, ອະດີດ ປະທານປະເທດ ແຫ່ງ ສ.ສ. ຫວຽດນາມ, ເຊິ່ງເປັນການສູນເສຍຜູ້ນຳທີ່ສຳຄັນຂອງພັກ-ລັດ ແລະ ປະຊາຊົນ ຫວຽດນາມ.





ທ່ານ ເລ ດຶກ ແອັງ ເປັນການນຳທ່ານໜຶ່ງທີ່ໄດ້ປະກອບສ່ວນອັນໃຫຍ່ຫຼວງໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງ ສ.ສ. ຫວຽດນາມ, ໃນຕະຫລອດຊີວິດຂອງການເຄື່ອນໄຫວປະຕິວັດ ຫລາຍກວ່າ 80 ປີ ຂອງທ່ານໃນຂະບວນການຕໍ່ສູ້ກູ້ຊາດຕ້ານຈັກກະພັດຜູ້ຮຸກຮານ, ກອບກູ້ ແລະ ທ້ອນໂຮມ ປະເທດຊາດຫວຽດນາມ ແລະ ໃນສະໄໝປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນໄລຍະໃໝ່.

**#ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ